ກອງທຶນສົ່ງເສີມການເຂົ້າເຖິງແຫຼ່ງທຶນໃນ ສປປ ລາວ (Lao Access to Finance Fund- LAFF)

ໂຄງການເລກທີ 2008 65 220, ແລະ 2018 67 639

ອີງຕາມສັນຍາ ແລະ ຂໍ້ແນະນຳຈາກ ທະນາຄານພັດທະນາເຢຍລະມັນ (KfW), ທະນາຄານແຫ່ງ ສປປ ລາວ ຂໍແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈ ເພື່ອເຂົ້າຮ່ວມຍື່ນໜັງສືສະເໜີລາຄາໃນການໃຫ້ບໍລິການກວດສອບ ກອງທຶນ LAFF ເຊິ່ງກວມເອົາໄລຍະແຕ່ວັນທີ "01 ມັງກອນ 2025 ຫາ 31 ທັນວາ 2025". ເງື່ອນໄຂຄວາມຕ້ອງການ ແລະ ຄຳແນະນຳໃນການຍື່ນໜັງສືສະເໜີລາຄາ ດັ່ງລາຍລະອຽດລຸ່ມນີ້: ``

I. ຄວາມເປັນມາ ແລະ ພາບລວມ ຂອງກອງທຶນ:

ກ) ຈຸດປະສົງຂອງໂຄງການ

- ຈຸດປະສົງໂດຍລວມຂອງໂຄງການ ແມ່ນເພື່ອສົ່ງເສີມການຂະຫຍາຍຕົວຂອງເສດຖະກິດຂອງລາວ ແບບຍືນຍົງ ໂດຍການ ປັບປຸງສະພາບແວດລ້ອມການດຳເນີນທຸລະກິດຂອງລະບົບການເງິນ ແລະ ການທະນາຄານຂອງລາວ ຊຶ່ງການ ປັບປຸງເຫຼົ່ານີ້ ຈະຊ່ວຍໃນການປັບປຸງສະພາບແວດລ້ອມທາງທຸລະກິດສຳລັບຫົວໜ່ວຍ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs);
- ຈຸດປະສົງອັນສະເພາະຂອງໂຄງການ ແມ່ນເພື່ອອຳນວຍຄວາມສະດວກໃຫ້ແກ່ຫົວໜ່ວຍ MSMEs ໃນການເຂົ້າເຖິງການບໍລິການດ້ານການເງິນໄລຍະຍາວ ໃນຂະແໜງການເງິນພາຍໃນປະເທດ ໂດຍໃຫ້ສະຖາບັນການເງິນຄູ່ຮ່ວມງານທີ່ມີ ເງື່ອນໄຂ ເປັນຕົວແທນໃນການສະໜອງເງິນກູ້ , ຊຶ່ງເຫັນວ່າຈະມີຄວາມສອດຄ່ອງກັບສະພາບແວດລ້ອມທາງທຸລະກິດທີ່ມີຢູ່ແລ້ວຂອງລະບົບທະນາຄານໃນປະເທດ. ເຫດຜົນໃນການສຸມໃສ່ຫົວໜ່ວຍ MSMEs ກໍ່ເພື່ອແນໃສ່ແກ້ໄຂຫຼຸດຜ່ອນຄວາມທຸກຍາກ ໂດຍການສ້າງວຽກເຮັດງານທຳ ແລະ ການສ້າງລາຍຮັບ.

ຂ) ເງິນທຶນ ແລະ ກົນໄກການດຳເນີນງານຂອງໂຄງການ

- ກິດຈະກຳຂອງໂຄງການປະກອບດ້ວຍການປະກອບສ່ວນຂອງລັດຖະບານເຍຍລະມັນໂດຍຜ່ານ KfW ສະໜອງທຶນໝູນວຽນ ກອງທຶນສົ່ງເສີມການເຂົ້າເຖິງແຫຼ່ງທຶນໃນ ສປປ ລາວ (LAFF) ໃຫ້ແກ່ ສປປ ລາວ. ທະນາຄານແຫ່ງ ສປປ ລາວ (ອົງກອນຜູ້ບໍລິຫານໂຄງການ) ໄດ້ຮັບມອບໝາຍ ໃຫ້ບໍລິຫານຄຸ້ມຄອງເງິນຊ່ວຍເຫຼືອລ້າດັ່ງກ່າວ ເພື່ອນຳໄປປ່ອຍກູ້ເປັນສະກຸນເງິນທ້ອງຖິ່ນ ໃຫ້ແກ່ທະນາຄານທຸລະກິດ (ທທກ) ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ (ສກຈຮ) ທີ່ມີເງື່ອນໄຂຄົບຖ້ວນ ເພື່ອນຳໄປກູ້ຕໍ່ໃຫ້ແກ່ບັນດາຫົວໜ່ວຍ MSMEs ທີ່ມີເງື່ອນໄຂ.
- ກອງທຶນ ໄດ້ສະໜອງເງິນກູ້ແບບມອບເໝົາໃຫ້ແກ່ 7 ສະຖາບັນການເງິນທີ່ເປັນຄູ່ຮ່ວມງານ (ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ), ລວມມີ: ທະນາຄານ ເອຊີລີດາ ລາວ ຈຳກັດ, ທະນາຄານ ໄຊງ່ອນ ເທື່ອງຕົ້ນ ລາວ ຈຳກັດຜູ້ດຽວ, ທະນາຄານ ບີໄອຊີ ລາວ ຈຳກັດ, ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ປະຕູຄຳ , ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຈຳປາລາວ, ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ເອກພັດທະນາ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ສິນຊັບເມືອງເໜືອ (ເປັນທີ່ຮູ້ຈັກທົ່ວໄປໃນນາມ PFIs - ສະຖາບັນການເງິນທີ່ເປັນຄູ່ຮ່ວມງານ).

ຂອບເຂດການກວດສອບ

1. ເງື່ອນໄຂ

- **ພາບລວມ**

ຈຸດປະສົງຂອງການກວດສອບທຶນໝູນວຽນ (ລວມທັງບັນຊີພິເສດທີ່ເປີດຢູ່ກັບ ທະນາຄານແຫ່ງ ສປປ ລາວ ແລະ ສະຖາບັນການເງິນທີ່ເປນຄູ່ຮ່ວມງານ) ແມ່ນເພື່ອໃຫ້ຜູ້ກວດສອບສາມາດສະແດງຄວາມຄິດເຫັນຢ່າງເປັນມືອາຊີບຂອງຕົນຕໍ່ບົດລາຍງານຖານະການເງິນ ແລະ ບັນດາລາຍຈ່າຍ ທີ່ທີມງານບໍລິຫານຂອງກອງທຶນຮັບຜິດຊອບຄຸ້ມຄອງຜ່ານກອງທຶນ ທີ່

ສ້າງຂຶ້ນພາຍໃຕ້ການປະກອບສ່ວນທາງດ້ານການເງິນ ແລະ ການຊ່ວຍເຫຼືອລ້າສະບັບເລກທີ 2008 65 220 ແລະ ສະບັບເລກທີ 2018 67 639 ໂດຍ KfW ໃຫ້ກັບກອງທຶນ ພາຍໃຕ້ການຮ່ວມມືດ້ານການເງິນຂອງເຢຍລະມັນ ກັບ ສປປ ລາວ.

- **ການກວດສອບ**

ການດຳເນີນການກວດສອບຈະປະຕິບັດຕາມ (ສາກົນ/ລະດັບຊາດ) ມາດຕະຖານການກວດສອບ ແລະ ຈະລວມເອົາການທົດສອບ ແລະ ການຄວບຄຸມ ຕາມທີ່ຜູ້ກວດສອບເຫັນວ່າມີຄວາມຈຳເປັນ. ຜູ້ກວດສອບຈະນຳໃຊ້ມາດຕະຖານສາກົນ ISAE 3000 ສະບັບປັບປຸງ. ຂໍ້ຄິດເຫັນຂອງຜູ້ກວດສອບທີ່ລະບຸຢູ່ໃນໃນບົດລາຍງານຄວາມຄິດເຫັນຂອງການກວດສອບ, ຈະຕ້ອງລະບຸຢ່າງຊັດເຈນດັ່ງນີ້:

- ບົດລາຍງານການເງິນທີ່ຜ່ານການກວດສອບ (ເຊັ່ນ: ເອກະສານການທົບທວນຂອງບັນຊີ) ໄດ້ມີການກະກຽມຕາມມາດຕະຖານການບັນຊີ (ສາກົນ/ແຫ່ງຊາດ) ແລະ ສັນຍາດ້ານການເງິນ ແລະ ສັນຍາສະບັບແຍກ.
- ລາຍໄດ້ທີ່ຢູ່ໃນບັນຊີຕ້ອງໄດ້ນຳໃຊ້ສະເພາະສຳລັບລາຍຈ່າຍທີ່ໄດ້ກຳນົດໄວ້ໃນສັນຍາທີ່ກ່ຽວຂ້ອງ (ເງິນກູ້/ການເງິນ).
- ຂໍ້ກຳນົດ ແລະ ພັນທະຂອງສັນຍາການເງິນ ແລະ ສັນຍາສະບັບແຍກ, ຈົນຮອດປັດຈຸບັນແມ່ນມີການນຳໃຊ້ຢ່າງເໝາະສົມ (ເຊັ່ນ: ກ່ຽວກັບການຈັດຊື້ຈັດຈ້າງ ຫຼື ລາຍຮັບຈາກດອກເບ້ຍ).
- ເອກະສານສະໜັບສະໜູນທີ່ຈຳເປັນທັງໝົດ ແລະ ການບັນທຶກ ສຳລັບການກວດກາ ແມ່ນມີຄົບຖ້ວນ.
- ການກວດສອບຄວນກວມເອົາທັງ ເງິນທຶນທີ່ກອງທຶນ LAFF ໄດ້ຮັບ ແລະ ເງິນທຶນທີ່ກອງທຶນໄດ້ຄຸ້ມຄອງບໍລິຫານໂດຍ LMU ເຊັ່ນດຽວກັນກັບຂະບວນການດຳເນີນງານ ແລະ ປະສິດທິພາບຂອງການຄວບຄຸມພາຍໃນ.
- ການກວດສອບຄວນກວມເອົາການກວດກາພາກສະໜາມ ໂດຍການສຸ່ມກວດລູກຄ້າເງິນກູ້ບາງລາຍ ເພື່ອໃຫ້ຮູ້ວ່າມີການນຳໃຊ້ເງິນກູ້ຢ່າງຖືກຈຸດປະສົງ ແລະ ເງື່ອນໄຂ ຂອງໂຄງການ.
- ຜູ້ກວດສອບ ຈະທົບທວນເອກະສານຂອງອົງກອນຜູ້ບໍລິຫານໂຄງການ ທີ່ກ່ຽວຂ້ອງກັບໂຄງການ ແລະ ເອກະສານຕ່າງໆທີ່ໄດ້ຮັບຈາກ ສະຖາບັນການເງິນທີ່ເປັນຄູ່ຮ່ວມງານ (PFIs). ຜູ້ກວດສອບ ມີສິດໃນການຂໍຂໍ້ມູນເພີ່ມເຕີມ ແລະ ເອກະສານຕິດພັນທີ່ຈຳເປັນຈາກ PFIs ເພື່ອເຮັດໃຫ້ການກວດສອບສຳເລັດ.

- **ການຈັດສົ່ງບົດລາຍງານການກວດສອບ**

ບົດລາຍງານການກວດສອບ ລວມທັງຂໍ້ຄິດເຫັນຂອງການກວດສອບ ຕ້ອງສົ່ງໃຫ້ ທະນາຄານແຫ່ງ ສປປ ລາວ ແລະ KfW ບໍ່ໃຫ້ກາຍເດືອນ ມິຖຸນາ 2026 ຫຼັງຈາກໄດ້ສະບັບສົມບູນ. ຄຽງຄູ່ກັບບົດລາຍງານຂໍ້ຄິດເຫັນຂອງການກວດສອບ, ຜູ້ກວດສອບຈະຕ້ອງກະກຽມ "ບົດລາຍງານການບໍລິຫານຄຸ້ມຄອງ" ເຊິ່ງໃນບົດລາຍງານນີ້ ຕ້ອງປະກອບມີດັ່ງນີ້:

- ໃຫ້ຄຳເຫັນ ແລະ ຂໍ້ສັງເກດ ກ່ຽວກັບການບັນທຶກບັນຊີ, ລະບົບ ແລະ ການຄວບຄຸມທີ່ໄດ້ກວດສອບ ໃນລະຫວ່າງການກວດສອບ (ເທົ່າທີ່ຈຳເປັນສຳລັບຄວາມເຂົ້າໃຈຂອງບົດລາຍງານການເງິນ);
- ກຳນົດຂໍ້ບົກພ່ອງອັນສະເພາະ ແລະ ຂອບເຂດຈຸດອ່ອນຂອງລະບົບ ແລະ ການຄຸມຄອງບໍລິຫານ ຂອງກອງທຶນ ທີ່ຜູ້ກວດສອບໄດ້ພົບເຫັນ ໂດຍສະເພາະກ່ຽວກັບການຖອນເງິນ, ການຈັດຊື້, ການເກັບຮັກສາ ແລະ ການໂອນເງິນ, ແລະ ໃຫ້ຄຳແນະນຳໃນການປັບປຸງແກ້ໄຂ;
- ລາຍງານການຈັດຕັ້ງປະຕິບັດວຽກງານຂອງຄະນະບໍລິຫານງານກອງທຶນ ເພື່ອປັບປຸງບັນດາຂໍ້ບົກພ່ອງ ແລະ ຈຸດອ່ອນ ທີ່ໄດ້ລາຍງານໃນໄລຍະຜ່ານມາ;

2. **ໄລຍະການກວດສອບ ແຕ່ວັນທີ 01 ມັງກອນ 2025 ຫາ 31 ທັນວາ 2025 (ໜຶ່ງປີ)**
3. **ກຳນົດເວລາການລາຍງານ:** ບົດລາຍງານການກວດສອບ ຈະຕ້ອງສຳເລັດ ແລະ ນຳສົ່ງ ພາຍໃນວັນ 31 ມິຖຸນາ 2025

- ມີການຈັດປະຊຸມຮ່ວມກັນຢ່າງໜ້ອຍໜຶ່ງຄັ້ງໃນລະຫວ່າງການກວດສອບ ເພື່ອອັບເດດຄວາມຄືບໜ້າ;
- ໃນຊ່ວງເລີ່ມຕົ້ນການກວດສອບ, ຜູ້ກວດສອບຕ້ອງ ສະໜອງແຜນການກວດສອບ ພ້ອມກຳນົດກອບເວລາສະເພາະສຳລັບກິດຈະກຳ ແລະ ກອງປະຊຸມຕ່າງໆ, ກຳນົດເວລາສຳລັບການຕອບກັບ, ການສະຫຼຸບຜົນຂັ້ນສຸດທ້າຍ ແລະ ອື່ນໆ.

4. **ການຊຳລະຄ່າບໍລິການ:** ການຊຳລະຄ່າບໍລິການກວດສອບ ຈະໄດ້ແບ່ງງວດຊຳລະເປັນ 2 ງວດຄື: ① ງວດທີ 1: ຊຳລະ 40% ຂອງຄ່າບໍລິການທັງໝົດ; ພາຍຫຼັງສຳເລັດການເຊັນສັນຍາກວດສອບກອງທຶນ; ② ງວດທີ 2: ຊຳລະ 60% ຂອງຄ່າບໍລິການທັງໝົດ; ພາຍຫຼັງທີ່ກອງທຶນໄດ້ຮັບບົດກວດສອບສະບັບສົມບູນ ແລະ ຖືກຮັບຮອງແລ້ວ.
5. **ການສົ່ງບົດສະເໜີການກວດສອບ:** ກະລຸນາສົ່ງໜັງສືສະເໜີຂອງທ່ານ 1 ຊຸດ ພ້ອມທັງເອກະສານຄັດຕິດ ໂດຍລະບຸ ຂໍ້ຄວາມໄວ້ດ້ານໜ້າຊອງຢ່າງຊັດເຈນວ່າ "ໃບສະເໜີສຳລັບການສະໜອງບໍລິການກວດສອບ ກອງທຶນ LAFF"

ສົ່ງເຖິງ:

ທ່ານນ. ສ້ອຍສຸວັນ ສີບໍລິບູນ, ຜູ້ຈັດການກອງທຶນ LAFF
ກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ
ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ;
ໂທ: 020 22440559;
ກະລຸນາສົ່ງໜັງສືສະເໜີຂອງທ່ານ ກ່ອນວັນທີ **27 ມີນາ 2026.**
ທຸກໜັງສະເໜີຕ້ອງໄດ້ລົງນາມໂດຍຜູ້ບໍລິຫານ ຫຼື ພະນັກງານ ທີ່ມີອຳນາດຕາມກົດໝາຍ.

ຂໍຂອບໃຈ